ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 01 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2019

ສໍານັກງານ ຄຄຊ
ເລີ່ມ ເລກທີ 0073
ວັນທີ 22 JAN 2019
ທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈໍາເດືອນ ທັນວາ ປີ 2018 ແລະ ທິດທາງແຜນການເດືອນ ມັງກອນ ປີ 2019

## ພາກທີ I

## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງ ທຫລ ໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈໍາເດືອນ ທັນວາ 2018 ແລະ ທິດທາງແຜນການໃນເດືອນ ມັງກອນ 2019 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ

- ສໍາເລັດການເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສະພາແຫ່ງຊາດຊຸດທີ VIII; ກອງປະຊຸມ ນາຍົກ-ຮອງນາຍົກ ລັດຖະມົນຕີ ປະຈໍາເດືອນ ທັນວາ 2018; ກອງປະຊຸມລັດຖະບານສະໄໝສາມັນ ປະຈໍາເດືອນ ທັນວາ 2018; ກອງປະຊຸມປຶກສາຫາລືກ່ຽວກັບບັນຫາເສດຖະກິດມະຫາພາກ ເພື່ອກະກຽມເນື້ອໃນໃນການເຮັດວຽກກັບຄະນະຊ່ຽວຊານຂອງປະເທດ ສສ. ຫວຽດນາມ; ກອງປະຊຸມພົບປະຜູ້ຊົງຄຸນນະວຸດທິບັນດາຊົນເຜົ່າທົ່ວປະເທດ ຄັ້ງທີ 03 ປີ 2018;
- ສໍາເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງ II ປະຈໍາປີ 2018; ກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະໄໝສາມັນ ຄັ້ງທີ II ປະຈໍາປີ 2018; ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈໍາປີ 2018; ກອງປະຊຸມສະພາບໍລິຫານສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ III ປະຈໍາປີ 2018; ກອງປະຊຸມສະພາວິຊາການ ສະໄໝວິສາມັນ ຄັ້ງທີ II ປະຈໍາປີ 2018;
- ສໍາເລັດການຕ້ອນຮັບພົບປະຈາກ: ① ທ່ານ ຜູ້ຕາງໜ້າຫ້ອງການ IMF ປະຈໍາ ສປປ ລາວ ແລະ ຫວຽດນາມ; ② ຄະນະຜູ້ແທນຈາກສະຖານທູດຍີ່ປຸ່ນ ປະຈໍາ ສປປ ລາວ; ③ ທະນາຄານແຫ່ງລັດຫວຽດນາມ ທີ່ໄດ້ມາຈັດກອງປະຊຸມສໍາມະນາໃນຫົວຂໍ້: "ວຽກງານບໍລິຫານເງິນສົດໃນຂອດຈໍລະຈອນ"; ④ ຄະນະຜູ້ແທນຈາກວິທະຍາໄລ Oxbridge ສປ. ຈີນ; ⑤ ຊ່ຽວຊານຈາກ ສປ. ຈີນ ທີ່ໄດ້ເຂົ້າມາຮ່ວມກວດສອບອຸປະກອນ ແລະ ໂປຣແກຼມທັງໝົດໃນລະບົບ LAPS ປະຈໍາໄຕມາດ 4 ປີ 2018;

– ຈັດຕັ້ງພິທີຕ່າງໆ: ① ພິທີມອບ-ຮັບໃບຢັ້ງຢືນການຕິດຕາມກວດກາກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນໍາພາຮອບດ້ານ ປະຈໍາປີ 2017; ② ພິທີປະຖະກະຖາວັນສ້າງຕັ້ງເມືອງວຽງໄຊ ຄົບຮອບ 50 ປີ; ③ ພິທີປາຖະກະຖາໃນຫົວຂໍ້: "ລະນຶກວັນສາກົນເພື່ອລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ 25 ພະຈິກ 2018" ແລະ ④ ພິທີພົບປະເພື່ອແລກປ່ຽນຄໍາຄິດເຫັນປະຈໍາປີ 2018 ລະຫວ່າງຄະນະຜູ້ອໍານວຍການ ທຫລ ກັບບັນດາກົມພາຍໃນ ທຫລ, ທທກ ແລະ ສະຖາບັນການເງິນຈຸລະພາກ;

## III. ສະພາບພື້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ

– ໃນເດືອນ 12/2018 ສະພາບເສດຖະກິດໂລກ ສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ ເຊິ່ງໄດ້ຮັບແຮງຍູ້ໜູນຂອງມູນຄ່າການສົ່ງອອກ, ມູນຄ່າການລົງທຶນ ແລະ ຄາດວ່າເສດຖະກິດໂລກຈະຂະຫຍາຍຕົວໝົດປີໃນລະດັບ 3,7% ໃນປີ 2018. ໃນນັ້ນ, ສ.ອາເມລິກາ 2,4%, ສະຫະພາບເອີຣົບ 2,0%, ຍີ່ປຸ່ນ 1,1%. ໃນຂົງເຂດອາຊີ ຄາດວ່າຈະຂະຫຍາຍຕົວສູງສະເລ່ຍໃນລະດັບ 6,5%, ເຊັ່ນ: ສປ.ຈີນ 6,6%, ອິນເດຍ 7,3%. ກຸ່ມປະເທດອາຊຽນ+5 ຂະຫຍາຍຕົວ 5,3% ໂດຍການຂະຫຍາຍຕົວດັ່ງກ່າວ ແມ່ນໄດ້ຮັບແຮງສະໜັບສະໜູນຂອງການຊົມໃຊ້ພາກເອກະຊົນ, ມູນຄ່າການສົ່ງອອກ. ສໍາລັບອັດຕາເງິນເຟີ້ໝົດປີ 2018 ມີທ່າອ່ຽງເພີ່ມຂຶ້ນ ເປັນຕົ້ນ ໃນຂົງເຂດປະເທດທີ່ພັດທະນາແລ້ວ ຢູ່ໃນລະດັບ 2,0%, ຈາກ 1,7% ໃນປີ 2017; ແລະ ໃນຂົງເຂດປະເທດກໍາລັງພັດທະນາຢູ່ໃນລະດັບ 5,0%, ຈາກ 4,3% ໃນປີ 2017.

– ສໍາລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າຂຶ້ນ 0,52% ທຽບເອີໂຣ ເນື່ອງຈາກຕົວເລກດັດຊະນີຂະແໜງອຸດສາຫະກໍາຂອງ ສ.ອາເມລິກາ ໃນເດືອນ 11/2018 ຢູ່ທີ່ລະດັບ 59,3 ຈຸດ ຊຶ່ງສູງກວ່າຕົວເລກທີ່ນັກວິເຄາະຄາດຄະເນໄວ້ວ່າຈະຢູ່ທີ່ລະດັບ 57,5 ຈຸດ ຈາກລະດັບ 57,7 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກຍອດຂາຍບ້ານປະຈໍາ ເພີ່ມຂຶ້ນ 1,4% ໃນເດືອນ 10/2018 ຊຶ່ງສູງກວ່າຕົວເລກທີ່ນັກວິເຄາະຄາດຄະເນວ່າຈະເພີ່ມຂຶ້ນ 1,0% ຈາກຫຼຸດລົງ 3,4% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກລາຍຮັບສ່ວນບຸກຄົນຂອງ ສ.ອາເມລິກາ ເພີ່ມຂຶ້ນ 0,5% ໃນເດືອນ 10/2018 ຊຶ່ງສູງກວ່າຕົວເລກທີ່ນັກວິເຄາະຄາດຄະເນວ່າຈະເພີ່ມຂຶ້ນ 0,4% ຈາກເພີ່ມຂຶ້ນ 0,2% ໃນເດືອນຜ່ານມາ.

– ໃນດ້ານລາຄານໍ້າມັນຫຼຸດລົງ 18,93% ຈາກ 65,92 ໂດລາ/ບາເຣວ ມາເປັນ 53,44 ໂດລາ/ບາເຣວ ເນື່ອງຈາກໄດ້ຮັບແຮງກົດດັນຈາກປະລິມານຄັງສໍາຮອງນໍ້າມັນດິບຂອງ ສ.ອາເມລິກາ ເພີ່ມຂຶ້ນ ໃນລະດັບທີ່ຫຼຸດລົງ, ໂດຍສະເພາະໃນອາທິດທີ 16/11/2018 ຄັງສໍາຮອງນໍ້າມັນດິບເພີ່ມຂຶ້ນ 4,85 ລ້ານບາເຣວ ຈາກທີ່ເຄີຍເພີ່ມຂຶ້ນ ຮອດລະດັບ 10,27 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ການສະໜອງນໍ້າມັນດິບຫຼາຍກວ່າຄວາມຕ້ອງການຂອງຕະຫຼາດ ໄດ້ກົດດັນໃຫ້ລາຄານໍ້າມັນຕໍ່າລົງອີກ ເນື່ອງຈາກ ສ.ອາເມລິກາ ໄດ້ປະກາດຜ່ອນຜັນໃຫ້ 8 ປະເທດທີ່ນໍາເຂົ້ານໍ້າມັນດິບຈາກປະເທດອີຣານ ຊຶ່ງປະກອບມີ: ສປ.ຈີນ, ອິນເດຍ, ກຣີດ, ອີຕາລີ, ໄຕ້ຫວັນ, ຍີ່ປຸ່ນ, ຕວກກີ້ ແລະ ສ.ເກົາຫຼີ ສາມາດນໍາເຂົ້ານໍ້າມັນດິບຈາກປະເທດອີຣານເປັນໄລຍະເວລາ 180 ວັນ ພາຍຫຼັງການປະກາດຂວໍ້າບາດປະເທດອີຣານ. ສ່ວນດ້ານລາຄາຄໍາເພີ່ມຂຶ້ນ 0,14% ຈາກ 1.226,27 ໂດລາ/ອອນ ມາເປັນ 1.227,95 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອປ້ອງກັນຄວາມສ່ຽງ.

### 2. ສະພາບເງິນຕາພາຍໃນ

– ອັດຕາເງິນເຟີ້ປະຈໍາເດືອນ 12/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,04% ຫຼຸດລົງຈາກ 2,14% ໃນເດືອນຜ່ານມາ. ສາເຫດຍ້ອນການຫຼຸດລົງຂອງລາຄາໝວດສະບຽງອາຫານ, ເຄື່ອງດື່ມທີ່ບໍ່ແມ່ນເຫຼົ້າ, ໝວດຄົມມະນາຄົມ ແລະ ການຂົນສົ່ງ;

- ຖານເງິນຕາປະຈຳເດືອນ 12/2018 ເພີ່ມຂຶ້ນ 1.053,71 ຕື້ກີບ ຫຼື 2,53% ທຽບໃສ່ເດືອນ 11/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4.375,19 ຕື້ກີບ ຫຼື 11,44%. ປະລິມານເງິນ M2 ເພີ່ມຂຶ້ນ 1.125,79 ຕື້ກີບ ຫຼື 2,41% ທຽບໃສ່ເດືອນ 11/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6.694,34 ຕື້ກີບ ຫຼື 8,54%;
- ອັດຕາແລກປ່ຽນທີ່ວລະບົບໃນເດືອນ 12/2018 ທຽບເດືອນ 11/2018 ເໜັງຕີງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບອ່ອນຄ່າລົງ 0,04% ທຽບເງິນໂດລາ ແຕ່ແຂງຄ່າຂຶ້ນ 0,28% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,75% ທຽບກັບເງິນໂດລາ ແລະ ອ່ອນຄ່າລົງ 4,05% ທຽບເງິນບາດ;
- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 12/2018 (09/11/2018-10/12/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດເພີ່ມຂຶ້ນ 3,08%. ທທກ ຂາຍເງິນຕາຕ່າງປະເທດສຸດທິ 53,77 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 11,28 ລ້ານໂດລາສະຫະລັດ ແລະ ຂາຍບາດສຸດທິ 1.357,55 ລ້ານບາດ ຫຼື 42,49 ລ້ານໂດລາສະຫະລັດທຽບເທົ່າ). ໃນຂະນະດຽວກັນ, ທຫລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 18,86 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍໂດລາສຸດທິ 29,85 ລ້ານໂດລາສະຫະລັດ ແຕ່ຊື້ບາດ ສຸດທິ 351 ລ້ານບາດ ຫຼື 10,99 ລ້ານໂດລາສະຫະລັດທຽບເທົ່າ);
- ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 12/2018 (13/11/2018-12/12/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 102,30 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 738,35 ລ້ານໂດລາ ສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 487,91 ລ້ານໂດລາ, ຊຳລະຄ່າບໍລິການ ຈຳນວນ 47,72 ລ້ານໂດລາ ແລະ ຊຳລະເງິນກູ້ພາກລັດຖະບານ ຈຳນວນ 40,75 ລ້ານໂດລາ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 636,05 ລ້ານໂດລາ ສ່ວນໃຫຍ່ແມ່ນຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 310,77 ລ້ານໂດລາ, ຮັບເງິນຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 132,78 ລ້ານໂດລາ, ຮັບເງິນຈາກການບໍລິການ ຈຳນວນ 88,06 ລ້ານໂດລາ, ຮັບເງິນຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 61,30 ລ້ານໂດລາ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 10/12/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 73.543,35 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,95% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,44%. ເງິນຝາກເປັນເງິນກີບ ຫຼຸດລົງ 0,03% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 45,31% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 1,77% ຊຶ່ງກວມເອົາ 54,69% ຂອງເງິນຝາກທັງໝົດ;
- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 10/12/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 68.439,69 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,85% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,22%. ສິນເຊື່ອເປັນເງິນກີບ ກວມເອົາ 48,83% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,17% ຂອງສິນເຊື່ອທັງໝົດ;
- ທະນາຄານນະໂຍບາຍ ແມ່ນບໍ່ມີການປ່ອຍສິນເຊື່ອ ໃນເດືອນ 12/2018, ເກັບຕົ້ນທຶນໄດ້ 15,94 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,11% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 12/2018 ມີຈຳນວນ 3.094,77 ຕື້ກີບ ເທົ່າກັບ 98,53% ຂອງແຜນການ (3.140,93 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.050,10 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 291,69 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 326,65 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 426,37 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີ ຈຳນວນ 3.279 ສະບັບ ເພີ່ມຂຶ້ນ 6,67% ເປັນເງິນ ຈຳນວນ 1.768,19 ຕື້ກີບ ເພີ່ມຂຶ້ນ 24,59% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈຳນວນ 190 ຄັ້ງ ເພີ່ມຂຶ້ນ 2,15% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 791,97 ຕື້ກີບ ເພີ່ມຂຶ້ນ 8,94% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/11-24/12/2018 ມີຈຳນວນ 19.252 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 18.197 ຄັ້ງ ມີມູນຄ່າການໂອນ 6.399,05 ຕື້ກີບ ເພີ່ມຂຶ້ນ 24,71% ເມື່ອທຽບໃສ່ເດືອນຜ່ານມາ. ໃນນັ້ນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 5.362 ຄັ້ງ. ໃນນັ້ນ, ມີຜູ້ໃຊ້ບໍລິການທີ່ເຮັດທຸລະກຳ 44 ແຫ່ງ;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 1.055 ຄັ້ງ ມີມູນຄ່າການໂອນ 628,03 ຕື້ກີບ ເພີ່ມຂຶ້ນ 53,19% ທຽບໃສ່ເດືອນຜ່ານມາ.

### 4.2. ການຊື້-ຂາຍພັນທະບັດ

- ໃນເດືອນ 12/2018 ກະຊວງການເງິນໄດ້ມີການຈຳໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈຳນວນ 230 ຕື້ກີບ. ໃນນັ້ນ, ຈຳໜ່າຍໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 11 ຕື້ກີບ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 210 ຕື້ກີບ ແລະ ທະນາຄານພົງສະຫວັນ ຈຳນວນ 09 ຕື້ກີບ ແລະ ໄຖ່ຖອນພັນທະບັດຈຳນວນ 501 ຕື້ກີບ. ໃນນັ້ນ, ໄຖ່ຖອນພັນທະບັດ ໃຫ້ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 5 ຕື້ກີບ, ທະນາຄານພົງສະຫວັນ ຈຳນວນ 10 ຕື້ກີບ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 456 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ ຈຳນວນ 30 ຕື້ກີບ;
- ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.342,70 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ, ພັນທະບັດບ້ວງລ້າງໜີ້ 2.573 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.745,70 ຕື້ກີບ);
- ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 12/2018 ບໍ່ມີການຈຳໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 824,92 ຈຸດ ຫຼຸດລົງ 0,24% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 17,37% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1 ລ້ານກວ່າຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,53 ຕື້ກວ່າກີບ ຫຼຸດລົງ 56,21% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 68,66% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດຫຼຸດລົງຂອງດັດຊະນີຕະຫຼາດຫຼັກຊັບລາວແມ່ນຍ້ອນການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL, EDL-Gen ແລະ MHTL.

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 5.600 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 450.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,48 ຕື້ກວ່າກີບ ຫຼຸດລົງ 41,94% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 3.950 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 464.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,84 ຕື້ກວ່າກີບ ຫຼຸດລົງ 66,60% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 8.000 ກີບ/ຮຸ້ນ ແຕ່ບໍ່ມີການຊື້-ຂາຍຮຸ້ນ;

– ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບ 1.450 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,13 ລ້ານກີບ ຫຼຸດລົງ 18,42% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.800 ກີບ/ຮຸ້ນ ເພີ່ມຂຶ້ນ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,89 ລ້ານກີບ ເພີ່ມຂຶ້ນ 17,88% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດພູສີກໍ່ສ້າງ ມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 1.200 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,82 ລ້ານກວ່າກີບ ຫຼຸດລົງ 76% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.400 ກີບ/ຮຸ້ນ ຫຼຸດລົງ 600 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 22.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 44,35 ລ້ານກີບ ເພີ່ມຂຶ້ນ 258,82% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດມະຫະທຶນເຊົ່າສິນເຊື່ອ ມະຫາຊົນ (MHTL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.850 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 46.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 131,30 ລ້ານກວ່າກີບ ຫຼຸດລົງ 72,19% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດລາວອາໂກຣເທັກ ມະຫາຊົນ (LAT) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 750 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,36 ລ້ານກີບ ຫຼຸດລົງ 66,77% ເມື່ອທຽບໃສ່ເດືອນຜ່ານມາ.

6. <u>ວຽກງານອື່ນໆ</u>

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳຕ່າງໆຕາມແຜນການ ຈຳນວນ 06 ສະບັບ; ສຳເລັດການອອກໃບອະນຸຍາດສ້າງຕັ້ງສາຂາທະນາຄານ ໄຊງ່ອນ ເທື່ອງຕິ່ນ ລາວ ຈຳກັດ ສາຂາລ້ານຊ້າງ; ສຳເລັດການອອກຂໍ້ຕົກລົງຮັບຮູ້ການປ່ຽນແປງທີ່ຕັ້ງສຳນັກງານຂອງທະນາຄານ 3 ແຫ່ງ; ສຳເລັດການປະເມີນຊ່ອງວ່າງໃນການຈັດຕັ້ງປະຕິບັດຫຼັກການບາເຊວ 2 ຂອງທະນາຄານທຸລະກິດ ຈຳນວນ 6 ແຫ່ງ; ສຳເລັດການລົງກວດກາກັບທີ່ ສສງ ປະຈຳປີ 2018 ຈຳນວນ 04 ແຫ່ງ; ເຫັນດີກ່ຽວກັບການເພີ່ມທຶນຈົດທະບຽນ ຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກເພື່ອການພັດທະນາ ແລະ ສົ່ງເສີມທຸລະກິດ; ເຫັນດີກ່ຽວກັບການຍຸບເລີກການດຳເນີນທຸລະກິດ ແລະ ການສະເໜີຂໍຖອນເງິນຝາກຄ້ຳປະກັນທຶນຈົດທະບຽນ ຂອງ ໂຮງຊວດຈຳຟ້າໃສ່ຟອງສະຫວັນ;

– ວຽກງານຄຸ້ມຄອງຫຼັກຊັບ: ສຳເລັດການເອົາພັນທະບັດລັດຖະບານອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທົ່ວໄປ ແລະ ຊື້ຂາຍຜ່ານ ຕະຫຼາດຫຼັກຊັບລາວ; ອອກຂໍ້ຕົກລົງວ່າດ້ວຍການກຳນົດອັດຕາຄ່າທຳນຽມການຊື້-ຂາຍ ແລະ ການໂອນພັນທະບັດລັດຖະບານໃນຕະຫຼາດຫຼັກຊັບລາວ; ສຳເລັດການຮັບຮອງເອົາລະບຽບການຂອງຕະຫຼາດຫຼັກຊັບລາວຈຳນວນ 02 ສະບັບ; ສຳເລັດການຄົ້ນຄວ້າພິຈາລະນາໃຫ້ບໍລິສັດ 01 ແຫ່ງອອກຈຳໜ່າຍຮຸ້ນກູ້ຄືງເຫຼືອຢູ່ປະເທດໄທ; ສຳເລັດການຈັດກອງປະຊຸມຮ່ວມມືສອງຝ່າຍລະຫວ່າງ ສຄຄຊ ແລະ ຄຄຊ ສສ.ຫວຽດນາມ ຄັ້ງທີ 7 ປະຈຳປີ 2018;

– ສຳເລັດບົດສະຫຼຸບສຳຄັນຕ່າງໆ ເຊັ່ນ: ① ບົດລາຍງານສະພາບເສດຖະກິດມະຫາພາກ ແລະ ນະໂຍບາຍຂອງ ສປປ ລາວ ປະຈຳປີ 2018 (ERPD) ເພື່ອກະກຽມໃຫ້ແກ່ກອງປະຊຸມລະດັບສູງ; ② ບົດສະເໜີການກະຕຸ້ນເສດຖະກິດຂອງທະນາຄານແຫ່ງ ສປປ ລາວ; ③ ບົດສະຫຼຸບລາຍງານກ່ຽວກັບການແກ້ໄຂໄພພິບັດ; ④ ບົດປະກອບຄຳເຫັນໃສ່ ຮ່າງບົດສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ແລະ ບົດສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2018;

– ສຳເລັດການເຜີຍແຜ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍລະບົບການຊຳລະ. ພ້ອມທັງເປີດກ້ວາງທາບທາມຮ່າງ ດຳລັດວ່າດ້ວຍສູນຂໍ້ມູນຂ່າວສານສິນເຊື່ອ; ປຶກສາຫາລືກ່ຽວກັບຮ່າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບຊຳລະ; ປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ໃນການເກັບຊື້ເງິນຕາຕ່າງປະເທດຢູ່ໃນຕະຫຼາດລະຫວ່າງທະນາຄານ ແລະ ສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການມາດຕະຖານສາກົນດ້ານການບັນຊີ;

– ສຳເລັດການອອກແຈ້ງການຕ່າງໆເຊັ່ນ: ແຈ້ງການເຖິງສາຂາ ທຫລ, ທະນາຄານທຸລະກິດທົ່ວລະບົບ ແລະ ສະຖາບັນການເງິນຈຸລະພາກປະເພດຕ່າງໆ ກ່ຽວກັບການເພີ່ມທະວີກວດກາເງິນກີບ ແລະ ເງິນຕາຕ່າງປະເທດຂອງລູກຄ້າ; ແຈ້ງການເຖິງບັນດາທະນາຄານກ່ຽວກັບການປະຕິບັດມາດຕະຖານຄວາມປອດໄພທາງດ້ານ SWIFT.

## ພາກທີ II
## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ໃນນັ້ນເອົາໃຈໃສ່ເປັນພິເສດຕິດຕາມການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ, ຄວບຄຸມປັດໄຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ມາດຕະການບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຂໍ້ຕົກລົງວ່າດ້ວຍອັດຕາຄວາມໝັ້ນຄົງຂອງສະຖາບັນການເງິນ; ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ (ສະບັບປັບປຸງ); ຄົ້ນຄວ້າສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂປຼແກມບັນຊີຂອງ ທຫລ;

– ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດຕາມການປະກອບຄຳເຫັນຂອງສະມະຊິກສະພາແຫ່ງຊາດ;

– ສືບຕໍ່ປັບປຸງຮ່າງຍຸດທະສາດການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 8 ປີ (2018-2025);

– ສືບຕໍ່ກະກຽມກອງປະຊຸມ ຄື: ❶ ກອງປະຊຸມສະພາບໍລິຫານ ຂອງສຳນັກງານປົກປ້ອງເງິນຝາກ; ❷ ກອງປະຊຸມປຶກສາຫາລືກ່ຽວກັບການເຄື່ອນໄຫວຕິດຕາມ ແລະ ກວດກາທະນາຄານທຸລະກິດ; ❸ ຈັດຕັ້ງພິທີສະເຫຼີມສະຫຼອງວັນສ້າງຕັ້ງສະຖາບັນການທະນາຄານຄົບຮອບ 40 ປີ;

– ສືບຕໍ່ເຈລະຈາສັນຍາເງິນກູ້ກັບທະນາຄານ CDB ເພື່ອຊ່ວຍເຫຼືອ SME ຂອງ ສປປ ລາວ;

– ສືບຕໍ່ຕິດຕາມກວດກາທະນະບັດປອມ ແລະ ແຈ້ງໃຫ້ສັງຄົມລະວັງຕົວ;

– ສືບຕໍ່ຕິດຕາມການເກັບຄ່າທຳນຽມມອບເງິນສົດ, ເງິນຕາຕ່າງປະເທດປະເພດໃບນ້ອຍ ແລະ ເງິນເສື່ອມຄຸນນະພາບ ເພື່ອທົບທວນ ແລະ ປະເມີນຄືນໃນການຈັດຕັ້ງປະຕິບັດແຈ້ງການດັ່ງກ່າວ;

– ສືບຕໍ່ແກ້ໄຂບັນຫາກັບພາກສ່ວນກ່ຽວຂ້ອງຕໍ່ຄະດີບໍລິສັດ **PS** ສົ່ງເສີມກະສິກຳ ແລະ ອຸສາຫະກຳ ຄົບວົງຈອນ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ;

– ກະກຽມເຂົ້າຮ່ວມກອງປະຊຸມສອງຝ່າຍຮ່ວມກັບທະນາຄານແຫ່ງລັດຫວຽດນາມ ແລະ ທະນາຄານກາງກຳປູເຈຍ;

– ກະກຽມເນື້ອໃນຈັດກອງປະຊຸມສະຫຼຸບວຽກງານສະຖາບັນການເງິນ ປະຈຳປີ 2018;

– ກະກຽມບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກວດກາປະຈຳປີ 2018 ແລະ ທິດທາງແຜນການປີ 2019 ໃຫ້ຄະນະກວດກາສູນກາງພັກ;

– ກະກຽມຈັດຕັ້ງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ ຄົບຮອບ 70 ປີ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ວັດທະນາ ດາລາລອຍ

**ສົ່ງ:**
- ຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກຳມະທິການແຜນການການເງິນແລະການກວດສອບສະພາແຫ່ງຊາດ.
- ບັນດາກົມ ແລະທຽບເທົ່າກົມພາຍໃນທຫລ.
- ຄະນະຫ້ອງການທຫລ.
- ສຳເນົາ.